ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະສະເພາະກິດຮັບມືການແຜ່ລະບາດ
ຂອງພະຍາດໂຄວິດ-19

ເລກທີ 0304 /ອຄ.ສພກ

ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2021

# ແຈ້ງການ

ເຖິງ: - ຄະນະສະເພາະກິດ ກະຊວງກະສິກຳ ແລະ ປ່າໄມ້.
- ຄະນະສະເພາະກິດ ກະຊວງສາທາລະນະສຸກ.
- ຄະນະສະເພາະກິດ ກະຊວງການເງິນ.
- ຄະນະສະເພາະກິດ ກະຊວງການຕ່າງປະເທດ.
- ຄະນະສະເພາະກິດຂອງບັນດາແຂວງ, ນະຄອນຫຼວງວຽງຈັນ, ບັນດາດ່ານຊາຍແດນ ແລະ ສະໜາມບິນສາກົນ ທົ່ວປະເທດ.

ເລື່ອງ: ຍົກເລີກມາດຕະການໂຈະການນຳເຂົ້າຊົ່ວຄາວ ອາຫານທະເລ (ສົດ, ແຊ່ແຂງ) ທີ່ມາຈາກປະເທດທີ່ມີການລະບາດຂອງພະຍາດໂຄວິດ-19.

- ອີງຕາມ ດຳລັດ ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກ ສິນຄ້າ ເລກທີ 114/ລບ, ລົງວັນທີ 06 ເມສາ 2011.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງສະເພາະກິດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຮັບມືການແຜ່ລະບາດ ຂອງພະຍາດໂຄວິດ-19 ເລກທີ 0364/ອຄ.ກຈພງ, ລົງວັນທີ 06 ເມສາ 2020.
- ອີງຕາມ ໜັງສືສະເໜີ ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງ ໂຄວິດ-19 ເລກທີ 3442/ສພກ, ລົງວັນທີ 12 ເມສາ 2021.
- ອີງຕາມ ຜົນກອງປະຊຸມອະນຸກຳມະການຂອງຄະນະສະເພະກິດ ໃນການວາງມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19, ຄັ້ງວັນທີ 12 ເມສາ 2021.

ຜ່ານການປະສານງານ ກັບ ຂະແໜງການທີ່ກ່ຽວຂ້ອງ, ບັນດາອົງການຈັດຕັ້ງສາກົນ (ອົງການອານາໄມໂລກ, ອົງການອາຫານໂລກ) ແລະ ປະເທດທີ່ມີການນຳເຂົ້າ-ສົ່ງອອກອາຫານທະເລ (ສົດ, ແຊ່ແຂງ) ກ່ຽວກັບຫຼັກຖານຢັ້ງຢືນທາງດ້ານວິທະຍາສາດ ເຫັນວ່າ: ອາຫານທະເລ (ສົດ, ແຊ່ແຂງ) ບໍ່ແມ່ນພາຫະແຜ່ເຊື້ອພະຍາດໂຄວິດ-19 ຢ່າງແທ້ຈິງ. ສະນັ້ນ, ເພື່ອເຮັດໃຫ້ການນຳເຂົ້າ ແລະ ຈຳໜ່າຍອາຫານທະເລ (ສົດ, ແຊ່ແຂງ) ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ພ້ອມທັງຮັບປະກັນຄວາມປອດໄພ ຕໍ່ຜູ້ບໍລິໂພກ

**ຄະນະສະເພາະກິດກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ຍົກເລີກມາດຕະການໂຈະການນຳເຂົ້າ ແລະ ຜ່ານແດນ ຊົ່ວຄາວ ອາຫານທະເລ (ສົດ, ແຊ່ແຂງ) ທີ່ມາຈາກປະເທດທີ່ມີການລະບາດຂອງພະຍາດໂຄວິດ-19 ຕາມແຈ້ງການ ເລກທີ 1203/ອຄ.ສພກ, ລົງວັນທີ 24 ທັນວາ 2020.
2. ການນຳເຂົ້າ ແລະ ຜ່ານແດນ ອາຫານທະເລ (ສົດ, ແຊ່ແຂງ) ແມ່ນອະນຸຍາດໃຫ້ຜ່ານດ່ານສາກົນເທົ່ານັ້ນ ແລະ ຕ້ອງມີເອກະສານຢັ້ງຢືນສຸຂານາໄມຈາກປະເທດຕົ້ນທາງ ແລະ ປະຕິບັດຕາມເງື່ອນໄຂຕ່າງໆ ທີ່ຂະແໜງການກະສິກຳ ແລະ ປ່າໄມ້ ກຳນົດໄວ້ ຢ່າງເຂັ້ມງວດ.

3. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ສົມທົບກັບຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອລົງກວດກາການລັກລອບນໍາເຂົ້າ ແລະ ການຈໍາໜ່າຍ ອາຫານທະເລ (ສົດ, ແຊ່ແຂງ) ທີ່ບໍ່ຖືກຕ້ອງ. ຖ້າພົບເຫັນ, ແມ່ນໃຫ້ພິຈາລະນານໍາໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກໍານົດໄວ້.
4. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 01 ພຶດສະພາ 2021 ເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ເລກທີ 1203/ອຄ.ສພກ, ລົງວັນທີ 24 ທັນວາ 2020.

ຮອງລັດຖະມົນຕີ
ຮອງຫົວໜ້າຄະນະສະເພາະກິດ



ສົມຈິດ ອິນທະມິດ